

Vientiane College

# World Program

ຫຼັກສູດ World Program ຂອງວິທະຍາໄລວຽງຈັນປະກອບມີ 3 ລະດັບ ໂດຍເນັ້ນໃສ່ການສື່ສານທີ່ມີປະສິດທິພາບຂອງນັກຮຽນໄວໜຸ່ມ. ການມີສ່ວນຮ່ວມໃນທຸກໆກິດຈະກຳໃນຫ້ອງຮຽນແມ່ນຫົວໃຈສຳຄັນເພື່ອຜົນສຳເລັດໃນການຮໍ່າຮຽນ. ບາງຄັ້ງນັກຮຽນອາດໃຊ້ຄຳສັບທີ່ບໍ່ຖືກຕ້ອງ ຫຼື ບໍ່ມີຄວາມໝັ້ນໃຈ, ແຕ່ຄວາມພະຍາຍາມດັ່ງກ່າວແມ່ນຄຸນສົມບັດທີ່ສຳຄັນທີ່ສຸດຂອງນັກຮຽນ.

ສຳລັບປຶ້ມແບບຮຽນປະກອບມີ: Word English ແລະ Impact, ເນື້ອໃນສ່ວນຫຼາຍແມ່ນຄັດມາຈາກ National Geographic ແລະ TED talks. ສິ່ງດັ່ງກ່າວຈະຊ່ວຍໃຫ້ນັກຮຽນມີການຮຽນຮູ້ຢ່າງເປີດກວ້າງ, ພ້ອມດຽວກັນນັ້ນຍັງເປັນການເສີມສ້າງທັກສະການອ່ານ, ການຂຽນ, ການຟັງ ແລະ ການເວົ້າ.

ນອກນັ້ນ, ວິທະຍາໄລຂອງເຮົາຍັງສົ່ງເສີມການພັດທະນາການຄິດວິເຄາະຢ່າງເປັນລະບົບ ແລະ ທັກສະການຮໍ່າຮຽນທີ່ຈຳເປັນສຳລັບການປ່ຽນແປງຢ່າງໄວວາຂອງໂລກ.

ເພື່ອໃຫ້ລູກຂອງທ່ານໄດ້ຮັບຜົນການຮຽນທີ່ດີ, ການມາໂຮງຮຽນຢ່າງເປັນປົກກະຕິ ແມ່ນມີຄວາມສຳຄັນ ແລະ ຖ້າລູກຂອງທ່ານບໍ່ສາມາດມາຮຽນ ຫຼື ຈະຂາດຮຽນດ້ວຍເຫດຈຳເປັນ ກະລຸນາໂທແຈ້ງເພື່ອໃຫ້ໂຮງຮຽນຮັບຊາບ.

ນັກຮຽນຕ້ອງຖືອຸປະກອນການຮຽນມານຳເຊັ່ນ:

- ປຶ້ມແບບຮຽນ
- ປຶ້ມຂຽນ
- ແຟ້ມສຳລັບເກັບເອກະສານ
- ບິກ ແລະ ສໍ




ການທວນຄືນຄຳສັບ ຫຼື ການອ່ານໜັງສືຢູ່ບ້ານ ກໍຖືເປັນການເສີມສ້າງພັດທະນາການສຳລັບການຮຽນພາສາອັງກິດອີກດ້ວຍ. ທ່ານຈະຕ້ອງ ເຮັດວຽກບ້ານຕາມທີ່ອາຈານມອບໃຫ້.

ພວກເຮົາຮູ້ດີວ່າ ແຕ່ລະຄົນແມ່ນມີວິທີການຮຽນທີ່ແຕກຕ່າງກັນ, ຖ້າທ່ານຕ້ອງການປຶກສາກ່ຽວກັບຜົນການຮຽນຂອງລູກຫຼານຂອງທ່ານ, ພວກເຮົາ ມີພະນັກງານທີ່ມີປະສົບການເພື່ອໃຫ້ຄວາມຊ່ວຍເຫຼືອທ່ານ. ທ່ານຍັງສາມາດຕິດຕໍ່ອາຈານ ຫຼື ຂໍນັດພົບໄດ້ອີກດ້ວຍ.

**ພວກເຮົາຍິນດີຮັບຟັງທຸກຄຳຄິດເຫັນຂອງທ່ານ ເພື່ອເປັນປະໂຫຍດຕໍ່ໂຮງຮຽນ ແລະ ການສິດສອນ**

ວິທະຍາໄລວຽງຈັນ, ຖະໜົນ 23 ສິງຫາ, ບ້ານໂພນໄຊ
ອີເມວ: info@vientianecollege.com
ໂທ: 021 414 873, 414 052, 450 049

www.vientiane college.com
FIND US ON Vientiane College